

# ບົດສະເໜີໂຄງການຫຍໍ້
## ການຜະລິດຟອຍກວາດຈາກແຂມ
## ເພື່ອຊ່ວຍຫລຸດຜ່ອນຄວາມທຸກຍາກ
## ຂອງ ຊຸມຊົນໃນຊົນນະບົດ.

# ການຜະລິດຟອຍກວາດຈາກແຂມ ເພື່ອຊ່ວຍຫລຸດຜ່ອນ ຄວາມທຸກຍາກ ຂອງ ຊຸມຊົນໃນຊົນນະບົດ.

## 1. ເປົ້າໝາຍ:

ເພື່ອສະໜັບສະໜູນປະຊາຊົນບັນດາເຜົ່າໃນເຂດຊົນນະບົດພູດອຍ ຍົກລະດັບການຜະລິດເປັນອາຊີບທີ່ໝັ້ນຄົງ ມີລາຍຮັບສູງຂຶ້ນ ແລະ ເປັນການປະກອບສ່ວນ ທີ່ສຳຄັນເຂົ້າໃນການ ຫລຸດຜ່ອນຄວາມທຸກຍາກຂອງຊຸມຊົນໃນຊົນນະບົດ ໂດຍເຮັດການຜະລິດຟອຍແຂມທີ່ມີຄຸນນະພາບສູງ.

## 2. ພາກສະເໜີລວມ:



ໃນທົ່ວຂົງເຂດພາກເໜືອ ຂອງ ສປປລ, ການະລິດແຂມ ເປປັນແຫລ່ງສ້າງລາຍຮັບໃຫ້ແກ່ຫລາຍຄອບຄົວ ແລະ ຍັງເປັນແຫລ່ງອາຫານໃຫ້ແກ່ສັດລ້ຽງອີກດ້ວຍ. ຕົ້ນດອກແຂມ ມີຊື່ ວິທະຍາສາດວ່າ "Thysanolaena maxima", ເປັນພືດທຳມະຊາດທີ່ເກີດຂຶ້ນເອງ, ບາງບ່ອນກໍໄດ້ມີການປູກຢູ່ຕາມພື້ນທີ່ໄຮ່ເຫລົ່າ ແລະ ຕາມແຄມທາງ. ນອກຈາກວຽກງານການຕັດດອກແຂມແລ້ວ ກໍຍັງຕ້ອງໄດ້ໃຊ້ແຮງງານໃນການເກັບກູ້ແຂມ ແລ້ວກໍເອົາໄປຕາກແດດ ແລະ ໄປຟາດເອົາເມັດດອກອອກໃຫ້ໝົດຈາກກ້ານດອກສ່ວນທີ່ຈະເອົາໄປເຮັດຟອຍກວາດຕໍ່ໄປ. ໄລຍະລະດູການເກັບກ່ຽວດອກແຂມແມ່ນຈະຢູ່ໃນລະຫວ່າງສີ່ເດືອນເລີ້ມແຕ່ ເດືອນທັນວາ ຫາ ເດືອນມີນາ ແຕ່ບາງປີກໍປ່ຽນແປງໄປຕາມເງື່ອນໄຂສະພາບດິນຟ້າອາກາດຂອງແຕ່ລະທ້ອງຖິ່ນ.

ຕົ້ນແຂມກໍຍັງໄດ້ຖືກປູກຂຶ້ນເປປັນພືດເສດຖະກິດ ໂດຍຊາວບ້ານບາງຄົນ ແລະ ມີການນຳໃຊ້ປັດໃຈຂາເຂົ້າຊ່ວຍຈຳນວນໜ້ອຍທີ່ສຸດ. ໃນການປູກ ແມ່ນໃຊ້ເວລາໜ້ອຍກ່ວາປູກພືດສິນຄ້າອື່ນໆ. ຫລັງຈາກປູກແລ້ວກໍມີແຕ່ຕ້ອງໄດ້ເສຍຫຍ້າ ຫຼື ວັດຊະພືດອື່ນໆອອກ ແລະ ຕັດຕົ້ນແຂມໜຶ່ງຄັ້ງຕໍ່ປີ ຫລັງຈາກເກັບກ່ຽວ. ພ້ອມນັ້ນ, ການເກັບກ່ຽວແຂມຈາກສວນປູກ ແມ່ນງ່າຍກ່ວາການເກັບກ່ຽວເອົາຈາກປ່າທຳມະຊາດ ເພາະວ່າຜົນຜະລິດດອກແຂມຢູ່ໃນສວນປູກແມ່ນຈະມີຫລາຍກ່ວາຢູ່ໃນປ່າແບບຊະຊາຍ. ບັນດາຊາວກະສິກອນ ສາມາດປູກຕົ້ນແຂມດ້ວຍຮາກເຫງົ້າໃນປປີທີ່ 1 ແລະ ສາມາດເກັບກ່ຽວໄດ້ໃນປີທີ່ 3 ແລະ ປີຕໍ່ໆໄປຕະຫຼອດ, ຜົນຜະລິດ ຄາດວ່າໄດ້ 4 ຕ/ຮຕ ຊຶ່ງເປັນຍອດແຂມແຫ້ງ ແລະ ໄດ້ຟາດເອົາເມັດດອກອອກໝົດແລ້ວ, ສ່ວນຜົນຜະລິດທີ່ເກັບເອົາຈາກປ່າທຳມະຊາດ ແມ່ນຈະໄດ້ຮັບພຽງແຕ່ປະມານ 800 ຫາ 1,500 ກລ/ຮຕ.

ພາຍຫລັງທີ່ໄດ້ເກັບກ່ຽວເອົາດອກແຂມມາແລ້ວ ກໍຈະຕ້ອງໄດ້ເອົາໄຕາກແດດປະມານສອງຫາສາມມື້ເພື່ອໃຫ້ແຫ້ງດີແລ້ວກໍເອົາໄປຟາດເອົາເມັດດອກອອກໃຫ້ໝົດ, ສ່ວນເສັ້ນກ້ານດອກທີ່ເຫລືອກໍເອົາມັດລວມກັນເກັບມ້ຽນໄວ້ເພື່ອຂາຍໃຫ້ພໍ່ຄ້າເກັບຊື້ໃນລາຄາ 6,000 ກີບ/ກິໂລ ຫລື ບາງຈຳນວນກໍນຳເອົາໄປເຮັດເປັນຟອຍກວາດ ເພື່ອຂາຍເອົາເງິນໃນລາຄາ 15,000 ກີບ/ກ້ານ. ອີງຕາມມາດຕະຖານດ້ານຄຸນະພາບ ມີກ້ານດອກທີ່ຍາວ ແລະ ມີດອກເຕັມ ແມ່ນເປັນທີ່ຕ້ອງການຫລາຍ ແລະມັນຕ້ອງໄດ້ມີຄວາມສະອາດ ແລະ ບໍ່ຫັກບໍ່ເໜົ່າຖືກໂດກເສຍຫາຍ.

ໃນການເຮັດຟອຍ, ແມ່ນຍັງຕ້ອງໄດ້ໃຊ້ລຳຕົ້ນແຂມມາມັດໂຮມເຂົ້າກັນເປັນກ້ານຟອຍ ຫລື ບາງກໍລະນີກໍເອົາໄມ້ປ່ອງມາເຮັດກ້ານແທນກໍມີ. ແຂມແຫ້ງທີ່ໄດ້ຟາດເມັດອອກແລ້ວຈຳນວນ 1 ກິໂລ ຈະສາມາດເຮັດຟອຍໄດ້ 3 ກ້ານ, ແລະ ໜຶ່ງແຮງງານຄອບຄົວ ຈະສາມາດຜະລິດຟອຍຢູ່ເຮືອນຂອງຕົນເອງໄດ້ 12 ກ້ານ ຕໍ່ໜຶ່ງມື້, ເມື່ອຂາຍອອກແລ້ວກໍຈະມີລາຍຮັບສະເລ່ຽ ມື້ລະ 180,000 ກີບ ຫລືເທົ່າກັບ 21 USD. ນອກຈາກຟອຍກວາດເຮືອນແລ້ວ ປະຊາຊົນກໍຍັງໄດ້ຜະລິດເປັນຟອຍປັດອັນນ້ອຍໆ ເພື່ອເປັນແປງປັດຝຸ່ນ ຫລື ເປັນແປງທາສີ ກໍມີ. ຟອຍຈາກແຂມແມ່ນມີຄວາມທົນທານ ສາມາດເກັບຮັກສາ ແລະ ນຳໃຊ້ໄດ້ເປັນເວລາຫລາຍເດືອນ.

## 3. ເບື້ອງຫລັງຄວາມເປັນມາ:



ຄວາມຕ້ອງການຟອຍກວດຂອງຕະຫລາດທັງພາຍໃນ ແລະ ຕ່າງປະເທດ ແມ່ນມີຢູ່ຕະຫລອດໄປ. ອີງຕາມຂໍ້ມູນ ຈາກ 3 ແຂວງທີ່ ໂຄງການ ຕາບີ ໄດ້ເກັບກໍາສັງລວມໄວ້ວ່າ ໄດ້ມີການຈໍາໜ່າຍສົ່ງອອກແຂມແຫ້ງທີ່ຍັງບໍ່ທັນໄດ້ເຮັດການປຸງແຕ່ງສໍາເລັດຮູບເທື່ອນັ້ນ ເປັນຈໍານວນຫລວງຫລາຍ ໄປຍັງ ປະເທດຈີນ, ປະເທດໄທ ແລະ ປະເທດຫວຽດນາມ ຄື: ໃນປີ 2015 ໄດ້ມີການສົ່ງອອກຈາກ ແຂວງຫລວງພະບາງ 535 ໂຕນ, ແຂວງຊຽງຂວາງ 60 ໂຕນ ແລະ ແຂວງອຸດົມໄຊ 440 ໂຕນ ຄິດເປັນມູນຄ່າລາຍຮັບທັງໝົດປະມານ 5.61 ຕື້ກີບ ຫລື ເທົ່າກັບ 648,555 USD. ໃນ ປະເທດໄທ ກໍໄດ້ນໍາເອົາໄປເຮັດຟອຍກວາດສໍາເລັດຮູບເຊັ່ນກັນ ໂດຍປະສົມການນໍາໃຊ້ຢາງເປັນສ່ວນກ້ານ ຟອຍ ແລ້ວສົ່ງກັບຄືນມາຂາຍຢູ່ໃນ ສປປ. ລາວ ໃນລາຄາ ກ້ານລະ 50,000 ກີບ.

ປະຊາຊົນມີລາຍຮັບຈາກຕົ້ນແຂມ ນອກຈາກກ້ານດອກຂອງມັນແລ້ວ ກໍຍັງໄດ້ມີການນໍາໃຊ້ໃບອ່ອນໄປລ້ຽງສັດອີກ ໂດຍສະເພາະແມ່ນການລ້ຽງຊົນງົວເພື່ອຂາຍ, ສ່ວນໃບໃຫຍ່ໃບແກ່ກໍແມ່ນເອົາໄປຫໍ່ເຂົ້າຕົ້ມ (ເຂົ້າຕົ້ມເຂົ້າໄກ່ນ້ອຍຫໍ່ໃບແຂມ) ເພື່ອກິນຫລົ້ນເປັນອາຫານຫວ່າງ ແລະ ຂາຍເອົາເງິນເປັນລາຍຮັບເພີ່ມ (ທັງເປັນອາຫານຢາຜະລິດນໍ້ານົມສໍາລັບແມ່ລູກອ່ອນ). ນອກຈາກນັ້ນແລ້ວ ຕົ້ນແຂມກໍຍັງເກີດມີ ດ້ວງແຂມ ທີ່ເປັນປະໂຫຍດດ້ານປະໂລຫິນແກ່ຊາວບ້ານເພື່ອບໍລິໂພກ ແລະ ຂາຍເອົາເງິນເປັນລາຍຮັບເພີ່ມອີກ ໃນລາຄາຂາຍທີ່ສູງ ປະມານ 250,000 ກີບ/ກິໂລ.

ຕົ້ນແຂມ ແມ່ນຜະລິດຕະພັນຊີວະນາໆພັນທໍາມະຊາດຍືນຍົງຊະນິດໜຶ່ງ ທີ່ຊຸດຄົ້ນເອົາດອກຂອງມັນຫລາຍປານໃດກໍບໍ່ຖືກທໍາລາຍດັບສູນ, ແຕ່ເຫັນວ່າ ຍັງຕ້ອງໄດ້ມີຄວາມພະຍາຍາມເຮັດການຊຸກຍູ້ສົ່ງເສີມດ້ານການປຸງແຕ່ງເຮັດຟອຍໃຫ້ຫລາຍຂຶ້ນ, ເພາະວ່າປະຊາຊົນຢູ່ພາຍໃນຫລາຍໆບ້ານ ຍັງມີຄວາມຈໍາກັດດ້ານຮູ້ຄວາມສາມາດ ແລະ ເຕັກນິກວິທະຍາການໃນການຜະລິດຟອຍຄຸນນະພາບຢູ່ພາຍໃນບ້ານຕົນເອງ ແລະ ເພາະສະນັ້ນ ຈຶ່ງເປັນຂໍ້ຈໍາກັດດ້ານຄວາມສາມາດໃນການປຸງແຕ່ງ ເພື່ອສ້າງມູນຄ່າເພີ່ມ ແລະ ການຕະຫລາດໃຫ້ດີຂຶ້ນ.

## 4. ກິດຈະກໍາຫລັກ:



- ຍົກລະດັບການຝຶກອົບຮົມລະດັບສູງໃຫ້ແກ່ "ຄູຝຶກທ້ອງຖິ່ນ" ກ່ຽວກັບ ການປູກແຂມ, ການອານຸລັກແຂມ, ການເກັບກູ້ແຂມ, ການຜະລິດຟອຍຄຸນນະພາບ ທີ່ມີມູນຄ່າເພີ້ມ ແລະ ການຕະຫຼາດຫລາດ ເຊື່ອມໂຍງກັບການພັດທະນາຄຸ້ມຄອງດໍາເນີນການທຸລະກິດຂະໜາດນ້ອຍ;
- ສ້າງເຄືອຂ່າຍການຜະລິດຟອຍຢູ່ໃນຊຸມຊົນທ້ອງຖິ່ນຊົນນະບົດ ແລະ ສະໜັບສະໜູນຄູຝຶກທ້ອງຖິ່ນໃຫ້ຈັດ "ຝຶກອົບຮົມແບບເຮັດກັບໜ້າວຽກໂຕຈິງ" ໃຫ້ແກ່ "ບັນດາສະມາຊິກຜູ້ຜະລິດທີ່ມີຄວາມສົນໃຈ" ຊຶ່ງເປັນຜູ້ທີ່ມີຄວາມປະສົງຢາກຍົກລະດັບພັດທະນາການຜະລິດຟອຍເປັນອາຊີບແທ້ຈິງ ເພື່ອສ້າງລາຍຮັບໃຫ້ດີຂຶ້ນ; ຫລັງຈາກນັ້ນກໍເຮັດການສົ່ງເສີມໃຫ້ເຂົາເຈົ້າໄດ້ເຮັດການເກັບກູ້ດອກແຂມທັງທາງດ້ານຈໍານວນ ແລະ ຄຸນນະພາບ ແລະ ຜະລິດເປັນຟອຍທີ່ມີຄຸນນະພາບ ໄປຕາມທິດເພື່ອສ້າງເປັນ "ກິດຈະການທຸລະກິດຂະໜາດນ້ອຍ";

- ເພື່ອປຸກລະດົມສົ່ງເສີມໃຫ້ຊຸມຊົນເຮັດການອານຸລັກຄຸ້ມຄອງປ່າແຂມ ທຳມະຊາດ ແລະ ເຮັດການຂະຫຍາຍເນື້ອທີ່ປູກຕົ້ນແຂມ ໂດຍນຳໃຊ້ແນວພັນທີ່ດີມາປູກ ແລະ ບົວລະບັດຮັກສາ ຢູ່ພາຍໃນພື້ນທີ່ສະເພາະ. ກິດຈະກຳນີ້ ແມ່ນຈະຕິດພັນໂດຍກົງກັບການນຳໃຊ້ວິທີການເຮັດວຽກວາງແຜນ ຈັດສັນ ແລະ ຄຸ້ມຄອງການນຳໃຊ້ທີ່ດິນກະສິກຳ ແລະ ປ່າໄມ້ (pFALUPAM) ຊຶ່ງຈະເປັນການຕິດພັນອີກກັບວຽກການປ້ອງກັນສິ່ງແວດລ້ອມ ແລະ ອານຸລັກ ຊັບພະຍາກອນ ທຳມະຊາດ ແລະ ຊີວະນາໆພັນກະສິກຳ ແລະ/ຫລື ເຮັດການຜະລິດກະສິກຳ-ລ້ຽງສັດ-ປ່າໄມ້ແບບປະສົມປະສານ ຢູ່ໃນລະດັບຂົງເຂດພູມສັນຖານນຳອີກເຊັ່ນກັນ.
- ໃຫ້ການຊ່ວຍເຫລືອຊຸມຊົນເຂົ້າຮ່ວມໃນການສ້າງເອກະສານລະບຽບການຄຸ້ມຄອງຂອງທ້ອງຖິ່ນຕົນເອງ ແລະ ເຮັດການສົນທະນາປຶກສາຫາລື (ພາຍໃນຊຸມຊົນ ແລະ ອຳນາດການປົກຄອງທ້ອງຖິ່ນ) ເພື່ອພ້ອມພຽງກັນເປັນເອກະພາບຕົກລົງກ່ຽວກັບ ການອານຸລັກປ່າແຂມທຳມະຊາດ, ການປູກແຂມ, ການເກັບກ່ຽວແຂມ, ການປຸງແຕ່ງແຂມ, ການຕະຫລາດແຂມ ແລະ ການທຸລະກິດຂະໜາດນ້ອຍ, ຊຶ່ງລະບຽບການນັ້ນ ແມ່ນຈະໄດ້ອີງໃສ່ລະບົບການຄຸ້ມຄອງຕາມຮີດຄອງປະເພນີຂອງທ້ອງຖິ່ນທີ່ມີປະຕິບັດກັນມາແລ້ວ ແຕ່ຕ້ອງໄດ້ຕິດພັນກັບການຈັດຕັ້ງປະຕິບັດຕາມ ກົດໝາຍປ່າໄມ້, ທີ່ດິນ ແລະ ສະພາບແວດລ້ອມ ເປັນຢ່າງດີ, ຊຶ່ງວຽກນີ້ ແມ່ນຈະໄດ້ໃຫ້ມີການເຂົ້າຮ່ວມຂອງພາກລັດທີ່ກ່ຽວຂ້ອງ ເພື່ອອຳນວຍການຊ່ວຍເຫລືອເຂົ້າໃນການຮັບຮອງເປັນທາງການ, ໃຫ້ການແນະນຳ ແລະ ສະໜັບສະໜູນດ້ານນະໂຍບາຍຕ່າງໆ ໂດຍສະເພາະແມ່ນການອອກໃບຢັ້ງຢືນກຳມະສິດນຳໃຊ້ທີ່ດິນ ແລະ ການຮັບຮອງໃຫ້ນຳໃຊ້ປ່າເຫລົ່າທີ່ເປັນປ່າແຂມນັ້ນໃຫ້ເປັນພື້ນທີ່ການຜະລິດແຂມແບບຄົງທີ່ຍືນຍົງ.

## 5. ຄາດຄະເນຜົນໄດ້ຮັບ:



- ຈຳນວນ “ຄູຝຶກປະຈຳທ້ອງຖິ່ນ” ຂອງ ແຕ່ລະກຸ່ມຜະລິດ ມີຈຳນວນເພີ້ມຂຶ້ນ ຢ່າງໜ້ອຍ 3 ຄົນ ທີ່ໄດ້ຮັບການຝຶກອົບຮົມຍົກລະດັບຄວາມຮູ້ ຄວາມສາມາດສູງຂຶ້ນກ່ວາເກົ່າ;
- ຄວາມຮູ້ ຄວາມສາມາດຂອງສະມາຊິກກຸ່ມຜະລິດຂອງຊຸມຊົນຢ່າງໜ້ອຍສູງເພີ້ມຂຶ້ນປະມານ 90% ດ້ານການປູກແຂມ, ການອານຸລັກປ່າແຂມ, ການເກັບກ່ຽວແຂມ, ການປຸງແຕ່ງແຂມ ແລະ ການຕະຫລາດ ຕິດພັນກັບ ການດຳເນີນທຸລະກິດຂະໜາດນ້ອຍ;
- ເນື້ອທີ່ການປູກແຂມ ແມ່ນມີເພີ້ມຂຶ້ນ ແລະ ຜະລິດຕະພັນສູງຂຶ້ນ, ຢ່າງໜ້ອຍ 90% ຂອງ ສະມາຊິກກຸ່ມຜະລິດແຂມໄດ້ມີເນື້ອທີ່ສວນປູກແຂມທີ່ໄດ້ຮັບຜົນຜະລິດແຂມສູງເປັນຂອງຕົນເອງ;
- ຂະບວນການຜະລິດແຂມເປັນອາຊີບໄດ້ເຕີບໃຫຍ່ຂະຫຍາຍຕົວກ້ວາງຂວາງອອກຫລາຍຂຶ້ນ ແລະ ຜະລິດຕະພັນຟອຍກວາດທີ່ມີຄຸນນະພາບສູງ ກໍມີເພີ້ມຂຶ້ນເປັນຢ່າງໜ້ອຍ 70%;
- ປະລິມານການຂາຍ ແລະ ລາຄາຂາຍຜະລິດຕະພັນຟອຍກວາດທີ່ມີຄຸນນະພາບສູງໄດ້ເພີ້ມຂຶ້ນ ຢູ່ພາຍໃນຕະຫລາດທ້ອງຖິ່ນພາຍໃນປະເທດ ແລະ ຕະຫລາດຢູ່ຕ່າງປະເທດໃຫ້ຄຽງກໍຂະຫຍາຍຕົວກ້ວາງອອກ;
- ຂອບເຂດພື້ນທີ່ປ່າແຂມ ໄດ້ຖືກຈັດສັນແບ່ງເຂດເປັນຈຸດບໍລິເວນ ແລະ ລະບຽບການຄຸ້ມຄອງ (ທີ່ເປັນລະບຽບການຂອງທ້ອງຖິ່ນ) ຄັກແນ່ຊັດແຈ້ງລະອຽດດີ ກ່ຽວກັບ ການຄຸ້ມຄອງປ່າແຂມ, ການເກັບກ່ຽວແຂມ, ການຜະລິດຟອຍແຂມ ແລະ ການຕະຫລາດແຂມ ກໍໄດ້ມີການສ້າງຂຶ້ນ, ແລ້ວໄດ້ຕົກລົງເປັນເອກະພາບກັນ ແລະ ພ້ອມພາກັນປະຕິບັດເປັນຢ່າງດີ.

--------------------------------------------------------------------------------

*Note: More detail can be provided if the organization/investor is interesting and Proposal Documentation can be developed for further consideration (if required).*